ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0540 /ກປ

ນະຄອນຫຼວງວຽງຈັນ, ວັນທີ 09/02/2011

# ຂໍ້ຕົກລົງ
# ຂອງ ລັດຖະມົນຕີ
# ວ່າດ້ວຍ ມາດຕະຖານ ກະສິກຳທີ່ດີ
# ກ່ຽວກັບ ສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີກາ
# ນສັງຄົມ ຂອງຜູ້ອອກແຮງງານ

- ອີງຕາມກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ1998;
- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວ ຂອງ ກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1176/ກປຝ, ລົງວັນທີ 09 ພະຈິກ 2010.

# ໝວດທີ I
# ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອເປັນເຄື່ອງມື ໃນການປົກປ້ອງສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານທີ່ເຮັດການຜະລິດກະສິກຳທີ່ດີ.

**ມາດຕາ 2. ມາດຕະຖານກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການ ຂອງຜູ້ອອກແຮງງານ**

ມາດຕະຖານກະສິກຳທີ່ດີ ກ່ຽວກັບ ສຸຂະພາບ, ຄວາມປອດໄພແລະສະຫວັດດີການ ຂອງຜູ້ ອອກແຮງງານແມ່ນໄດ້ພັດທະນາຂຶ້ນບົນພື້ນຖານ ມາດຕະຖານກະສິກຳ ທີ່ດີ ຂອງອາຊຽນ ຊຶ່ງກວມເອົາຂໍ້ ກຳນົດຕ່າງໆທີ່ຕ້ອງປະຕິບັດຕໍ່ຜູ້ອອກແຮງງານ ທັງນີ້ກໍ່ເພື່ອປົກປ້ອງ ສິດຜົນປະໂຫຍດ, ສຸຂະພາບ, ຄວາມປອດໄພ ແລະສະຫວັດດີການ ຂອງຜູ້ອອກແຮງງານຢູ່ໃນ ສປປ ລາວ.

**ມາດຕາ 3. ອະທິບາຍຄຳສັບ**

**ຄຳສັບຕ່າງໆທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:**

1. **ມາດຕະຖານ** ໝາຍເຖິງ: ການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະອື່ນໆທີ່ກ່ຽວຂ້ອງກັບຄຸນນະພາບ;
2. **ການຜະລິດກະສິກຳທີ່ດີ** (Good Agriculture Practice "GAP") ໝາຍເຖິງ: ການນຳໃຊ້ວິທີການ ເພື່ອປ້ອງກັນ ຫຼືຫຼຸດຜ່ອນຄວາມສ່ຽງທີ່ເປັນອັນຕະລາຍອາດເກີດຂຶ້ນໃນລະຫວ່າງການຜະລິດ, ການເກັບກ່ຽວ ແລະຫຼັງການເກັບກ່ຽວ;

3. **ສານເຄມີ** ໝາຍເຖິງ: ຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ , ຮໍໂມນ, ສານເຄືອບຜິວ ແລະແຮ່ທາດບຳລຸງດິນ;
4. **ເຄມີອື່ນໆ** ໝາຍເຖິງ: ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ສິ່ງອື່ນໆ;
5. **ການເຮັດອານາໄມ/ທຳຄວາມສະອາດ** ໝາຍເຖິງ: ການລ້າງ, ເປົ່າ, ເຊັດ, ປັດ, ກວາດ ແລະຖູເອົາດິນ, ສິ່ງເປິເປື້ອນ ແລະສິ່ງແປກປອມອອກຈາກ ຜົນຜະລິດ, ສະຖານທີ່ປຸງແຕ່ງເບື້ອງຕົ້ນ ແລະສະຖານທີ່ເກັບມ້ຽນຜົນຜະລິດ;
6. **ອົງກອນທີ່ມີອຳນາດ** ໝາຍເຖິງ: ການຈັດຕັ້ງລັດ ຫຼື ເອກະຊົນ ທີ່ ຖືກຮັບຮອງ ເປັນ ອົງກອນທີ່ ມີສິດອຳນາດ ໃນການພັດທະນາ ຫຼື ກວດການມາດຕະຖານ ແລະຫລັກການຈັດຕັ້ງປະຕິບັດ ກົດລະບຽບ ແລະນະໂຍບາຍຕ່າງໆ . ຍົກຕົວຢ່າງ: ກົດລະຫັດອາຫານ (CODEX) ແມ່ນ ກົມອາຫານ ແລະ ຢາ, ກົມປູກຝັງ;
7. **ຊື່ຜະລິດຕະພັນ** ໝາຍເຖິງ: ຊື່ການຄ້າຂອງຜະລິດຕະພັນ;
8. **ຜູ້ນຳໃຊ້** ໝາຍເຖິງ: ຜູ້ຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການນຳໃຊ້ຝຸ່ນ, ຢາ ແລະ ສານເຄມີ;

## ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບປະຕິບັດ ສຳລັບບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ທີ່ມີຈຸດປະສົງ ດຳເນີນທຸລະກິດ ດ້ານການປູກພືດຕາມມາດຕະຖານ ກະສິກຳທີ່ດີ ຢູ່ສປປ ລາວ.

# ໝວດທີ II
# ສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ

**ມາດຕາ 5. ການນຳໃຊ້ສານເຄມີ ທີ່ກ່ຽວຂ້ອງກັບສຸຂະພາບ ແລະຄວາມ ປອດໄພຂອງຜູ້ອອກແຮງງານ**

1. ຜູ້ອອກແຮງງານ ຕ້ອງ ມີຄວາມຮູ້ ແລະ ປະສົບການໃນການ ຄຸ້ມຄອງ ແລະນຳໃຊ້ສານເຄມີ;
2. ຕ້ອງເກັບຮັກສາສານເຄມີ ໄວ້ໃນສະຖານທີ່ ທີ່ເໝາະສົມ ແລະ ຫ້າມບຸກຄົນທີ່ບໍ່ມີສ່ວນ ກ່ຽວຂ້ອງເຂົ້າໃນສະຖານທີ່ ເດັດຂາດ. ຕ້ອງຈັດວາງໂຄງສ້າງ, ສິ່ງກໍ່ສ້າງ ແລະປະກອບ ສິ່ງອຳນວຍ ຄວາມສະດວກ ເພື່ອປ້ອງກັນໃນກໍລະນີ ມີເຫດ ການ ສານເຄມີຕົກເຮ່ຍ;
3. ຕ້ອງເກັບຮັກສາສານເຄມີໄວ້ໃນພາຊະນະເດີມ ແລະຕິດເຄື່ອງ ໝາຍ, ຂໍ້ປະຕິບັດ ຫຼື ຄູ່ມືການ ນຳໃຊ້ ໃຫ້ ເຫັນ ຊັດ ເຈນ. ໃນກໍລະນີ ປ່ຽນຖ່າຍສານເຄມີ ໄປສູ່ພາຊະນະໃໝ່ ຕ້ອງຕິດ ເຄື່ອງໝາຍ , ຊື່, ອັດຕາການນຳໃຊ້ ແລະ ໄລຍະ ເວລາສິ້ນສຸດ ການນຳໃຊ້ ໃຫ້ເຫັນຢ່າງຈະແຈ້ງ;
4. ຕ້ອງມີຄູ່ມື ແລະຂໍ້ແນະນຳ ກ່ຽວກັບ ຄວາມປອດໄພ ການນຳ ໃຊ້ສານເຄມີ, ໃນກໍລະນີມີຄວາມສ່ຽງ ຈາກການປົນເປື້ອນ ຂອງສານເຄມີ ຕໍ່ຜູ້ອອກແຮງງານ;
5. ຕ້ອງມີສິ່ງອຳນວຍຄວາມສະດວກ ແລະ ມາດຕະການປະຖົມ ພະຍາບານເບື້ອງຕົ້ນ ຕໍ່ ຜູ້ອອກແຮງງານທີ່ ຖືກຜົນກະທົບ ຈາກ ສານເຄມີ;

6. ຕ້ອງມີຂໍ້ແນະນໍາ ຕິດໄວ້ໃນສະຖານທີ່ ໆເຫັນໄດ້ງ່າຍ ຢູ່ພາຍ ໃນ ຫຼື ໃກ້ໆກັບສະຖານ ທີ່ເກັບມ້ຽນສານເຄມີ ໃນກໍລະນີເກີດ ອຸປະຕິເຫດກະທັນຫັນ;
7. ຕ້ອງມີເຄື່ອງນຸ່ງ ແລະອຸປະກອນ ປ້ອງກັນສານເຄມີ ສໍາລັບ ຜູ້ນໍາໃຊ້ສານເຄມີເຂົ້າໃນການຜະລິດ;
8. ຕ້ອງອະນາໄມ ແລະເກັບເຄື່ອງນຸ່ງປ້ອງກັນສານເຄມີແຍກ ອອກຈາກອຸປະກອນອື່ນໆ;
9. ພື້ນທີ່ທີ່ນໍາໃຊ້ສານເຄມີ ໃຫ້ຕິດປະກາດຫ້າມ ເຂົ້າໃນພື້ນທີ່ດັ່ງ ກ່າວ ຕາມໄລຍະເວລາຂອງສານເຄມີທີ່ນໍາໃຊ້ . ໃນກໍລະນີຈໍາ ເປັນຕ້ອງເຮັດເຄື່ອງໝາຍເຕືອນໄພ ໃນພື້ນທີ່ໆຄົນເຂົ້າເຖິ ງໄດ້ ງ່າຍ.

## ມາດຕາ 6. ການເກັບກ່ຽວ ແລະການຮັກສາຜົນຜະລິດ

1. ຜູ້ອອກແຮງງານ ຊາວ ຕ່າງດາວ ຫຼື ພາຍ ໃນ ຕ້ອງ ມີ ສຸຂະພາບທີ່ແຂງແຮງ;
2. ຜູ້ອອກແຮງງານຕ້ອງໄດ້ຝຶກອົບຮົມ ແລະມີຄວາມຮູ້ກ່ຽວກັບ ການອະນາໄມສ່ວນບຸກຄົນ;
3. ຕ້ອງຂຽນຂໍ້ແນະນໍາກ່ຽວກັບການອະນາໄມສ່ວນບຸກຄົນ ແລະ ຕິດໄວ້ບ່ອນທີ່ຜູ້ອອກແຮງງານເຫັນໄດ້ງ່າຍ;
4. ຕ້ອງມີຫ້ອງນໍ້າ, ອຸປະກອນລ້າງມື ໃຫ້ຜູ້ອອກແຮງງານ ແລະບົວ ລະບັດຮັກສາ ໃຫ້ສະອາດຢູ່ເລື້ອຍໆ;
5. ບໍ່ໃຫ້ຖິ້ມນໍ້າເປື້ອນໃນບ່ອນ ທີ່ມີຄວາມສ່ຽງຂອງການປົນເປື້ອນ ຕໍ່ຜູ້ອອກແຮງງານ;
6. ຜູ້ນໍາໃຊ້ແຮງງານ ຕ້ອງຈັດຫາຢາ ແລະສິ່ງປ້ອງກັນຮ່າງກາຍ ໃຫ້ແກ່ຜູ້ອອກແຮງງານ, ໃນກໍລະນີ ມີບັນຫາເກີດຜົນກະທົບ ຮ້າຍແຮງ ດ້ານສຸຂະພາບ ຕໍ່ຜູ້ອອກແຮງງານ, ຜູ້ນໍາໃຊ້

ແຮງງານ ຕ້ອງລາຍງານໂດຍດ່ວນ ໃຫ້ ເຈົ້າໜ້າທີ່ ທີ່ ກ່ຽວຂ້ອງ;

7. ຜູ້ອອກແຮງງານຊາວຕ່າງດ້າວ ຕ້ອງໄດ້ກວດສຸຂະພາບ ແລະ ມີໃບຢັ້ງຢືນຈາກແພດ ຢ່າງຄົບຖ້ວນ;
8. ຕ້ອງນໍາໃຊ້ມາດຕະການຕ່າງໆ ເພື່ອ ຫຼຸດຜ່ອນຈໍານວນສັດຕູພືດ ແລະສິ່ງນໍາເຊື້ອພະຍາດ ຢູ່ໃນພື້ນທີ່ທໍາການຜະລິດ, ສະຖານທີ່ປະຕິບັດງານ, ສະຖານທີ່ຫຸ້ມຫໍ່ ແລະ ສາງເກັບມ້ຽນ.

## ມາດຕາ 7. ເງື່ອນໄຂຂອງການອອກແຮງງານ

1. ຕ້ອງມີເງື່ອນໄຂທີ່ເໝາະສົມ ສໍາລັບຜູ້ອອກແຮງງານ, ໃນບ່ອນ ທີ່ເປັນອັນຕະລາຍ ຕໍ່ຜູ້ອອກແຮງງານ ຕ້ອງສະໜອງເຄື່ອງນຸ່ງ ປ້ອງກັນໃຫ້ແກ່ເຂົາເຈົ້າ;
2. ອຸປະກອນ, ກົນຈັກ, ເຄື່ອງມືຕ່າງໆ ລວມທັງ ເຄື່ອງໃຊ້ໄຟຟ້າ ແລະ ພາຫະນະທຸກຄັນ ທີ່ຢູ່ໃນຟາມຄວນໄດ້ຮັບການຄຸ້ມຄອງ, ການກວດກາ ແລະບົວລະບັດຮັກສາເປັນ ປົກກະຕິ, ເພື່ອຮັບ ປະກັນບໍ່ໃຫ້ເປັນອັນຕະລາຍ ຕໍ່ຜູ້ນໍາໃຊ້;
3. ຕ້ອງປະຕິບັດຕາມຄູ່ມື ກ່ຽວກັບຄວາມປອດໄພ ໃນການປະຕິບັດໜ້າທີ່ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ເປັນອັນຕະລາຍ ຈາກການຍົກສິ່ງຂອງໜັກ, ການຫັນກຽວແໜ້ນເກີນໄປ ແລະການເຄື່ອນຍ້າຍສິ່ງຂອງ.

## ມາດຕາ 8. ສະຫວັດດີການ ຕໍ່ຜູ້ອອກແຮງງານ

1. ໃນສະຖານທີ່ ທີ່ ມີຫໍພັກໃຫ້ຜູ້ອອກແຮງງານຢູ່, ຜູ້ນໍາໃຊ້ແຮງງານ ຕ້ອງປະກອບເຄື່ອງໃຊ້ ແລະ ສິ່ງອໍານວຍຄວາມສະດວກທີ່ຈໍາເປັນ;

2. ຜູ້ອອກແຮງງານ ຕ້ ອງມີອາຍຸສູງກວ່າ 15 ປີ ຂຶ້ ນໄປຕາມ ລະບຽບກົດໝາຍ ຂອງ ສປປ ລາວ.

## ມາດຕາ 9. ການຝຶກອົບຮົມ ໃຫ້ແກ່ຜູ້ອອກແຮງງານ

1. ຕ້ອງໃຫ້ຄຳແນະນຳ ກ່ ຽວກັບຄວາມສ່ຽງທີ່ພົວພັນຕໍ່ສຸຂະພາບ ແລະຄວາມປອດໄພ ໃຫ້ແກ່ຜູ້ອອກແຮງງານໃໝ່ ກ່ອນການເລີ່ມຕົ້ນເຮັດວຽກ;
2. ຜູ້ອອກແຮງງານ ຕ້ອງ ໄດ້ຮັບການກວດສຸຂະພາບເປັນແຕ່ລະໄລຍະ ຫຼື ອີງຕາມຄວາມເໝາະສົມຂອງເວລາ;
3. ຜູ້ອອກແຮງງານ ຕ້ອງໄດ້ຮັບການຝຶກອົບຮົມ ແລະມີຄວາມຮູ້ດ້ານ:

   ກ. ການສ້ອມແປງ ຍານພາຫະນະ, ອຸປະກອນ ແລະເຄື່ອງມື;

   ຂ. ອຸປະຕິເຫດ ແລະສິ່ງທີ່ເກີດຂື້ນຢ່າງກະທັນຫັນ;

   ຄ. ການອະນາໄມສ່ວນບຸກຄົນ.

   ງ. ການນຳໃຊ້ສານເຄມີທີ່ປອດໄພ

   ຈ. ລະບຽບການດ້ານສະຫວັດດີການສັງຄົມ

## ມາດຕາ 10. ເອກະສານອ້າງອີງ ແລະບົດບັນທຶກຕ່າງໆ

1. ຕ້ອງເຮັດ ແລະເກັບຮັກສາບົດບັນທຶກ ກ່ຽວກັບການປະຕິບັດກະສິກຳທີ່ດີ ຢ່າງໜ້ອຍ 2 ປີ ຂຶ້ນໄປ.
2. ຄວນນຳໃຊ້ ເອກະສານທີ່ພົວພັນກັບສະພາບການປະຈຸບັນເທົ່ານັ້ນ.

## ມາດຕາ 11. ການທົບທວນຄືນ ກ່ຽວກັບການປະຕິບັດ ຕໍ່ຜູ້ອອກແຮງງານ

1. ຕ້ອງໄດ້ທົບທວນຄືນ ການຈັດຕັ້ງປະຕິບັດ ຕໍ່ຜູ້ອອກແຮງງານ ຢ່າງໜ້ອຍປີລະຄັ້ງ ເພື່ອ ຮັບປະກັນວ່າ ການຈັດຕັ້ງ ປະຕິບັດຕໍ່ຜູ້ອອກແຮງງານ ຖືກຕ້ອງຕາມລະບຽບທີ່ກ່ຽວຂ້ອງ;

2. ຕ້ອງເກັບຮັກສາບົດບັນທຶກ ກ່ຽວກັບການປະຕິບັດ ດ້ານສຸຂະພາບ ແລະສະຫວັດດີ ການສັງຄົມ ຕໍ່ຜູ້ອອກແຮງງານ ພ້ອມທັງ ວິທີການແກ້ໄຂ.

## ໝວດທີ III
## ການໃຊ້ກາໝາຍ ແລະສະຫຼາກ

### ມາດຕາ 12. ການໃຊ້ກາໝາຍ ກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ

1. ຜົນຜະລິດທີ່ຜ່ານການກວດກາ ແລະຮັບຮອງມາດຕະຖານກະສິກຳທີ່ດີກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ ຈາກ ກົມປູກຝັງເທົ່ານັ້ນ ຈິ່ງມີສິດນຳໃຊ້ກາໝາຍ ກະສິກຳທີ່ດີ ກ່ຽວກັບ ສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມຂອງຜູ້ອອກແຮງງານ;
2. ຫ້າມນຳໃຊ້ກາໝາຍກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມຂອງຜູ້ອອກແຮງ ງານເປັນຍີ່ຫໍ້ຂອງຜົນຜະລິດ, ກາໝາຍກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມຂອງຜູ້ອອກແຮງ ງານຕ້ອງບໍ່ເດັ່ນກວ່າຍີ່ຫໍ້ຂອງຜົນຜະລິດໂດຍ ຕົວອັກສອນບົ່ງບອກການຮັບຮອງມາດຕະຖານ ແລະສັນຍາລັກມາດຕະ ຖານກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມ ຂອງຜູ້ອອກແຮງງານຕ້ອງມີຂະໜາດບໍ່ເກີນ 3/4 ຂອງຍີ່ຫໍ້ຜົນຜະລິດ;

**ມາດຕາທີ 13. ການໃຊ້ສະຫຼາກ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ**

1. ພາຊະນະບັນຈຸ ຕ້ອງມີຊື່, ທີ່ຢູ່ຜູ້ຜະລິດ ຫຼື ຜູ້ປະກອບການຜູ້ຜະລິດສຸດທ້າຍທີ່ ຂໍການຮັບຮອງ ຈາກ ກົມປູກຝັງ, ພ້ອມທັງລະບຸແຫຼ່ງທີ່ມາຂອງຜົນຜະລິດ;
2. ກ່ອນມີການຈັດພິມສະຫຼາກ ຫຼືວັດຖຸຫຸ້ມຫໍ່ບັນຈຸຜົນຜະລິດທີ່ມີກາໝາຍມາດຕະຖານກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານຕິດຢູ່, ຜູ້ຜະລິດ ຫຼື ຜູ້ປະກອບການຕ້ອງສົ່ງສຳເນົາຕົ້ນສະບັບແບບສະຫລາກ ຫຼື ວັດຖຸຫຸ້ມຫໍ່ບັນຈຸຜະລິດຕະພັນ ໃຫ້ກົມປູກຝັງ ກວດກາ ຄວາມຖືກຕ້ອງກ່ອນທຸກໆຄັ້ງ.

## ໝວດທີ IV
## ການອອກໃບຢັ້ງຢືນ ກະສິກຳທີ່ດີ ກ່ຽວກັບ ສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ

**ມາດຕາ 14. ການອອກໃບຢັ້ງຢືນກະສິກຳທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດ ດີກາ ນສັງຄົມຂອງຜູ້ອອກແຮງງານ**

ກົມປູກຝັງ, ກະຊວງ ກະສິກຳ ແລະປ່າໄມ້ ເປັນຜູ້ຮັບຜິດຊອບ ໃນການປະເມີນຜົນ, ກວດກາ ແລະການອອກໃບຢັ້ງຢືນ ກະສິກຳທີ່ດີ ກ່ຽວກັບບສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມຂອງຜູ້ອອກແຮງງານໃນສປປລາວ.

# ໝວດທີ V
## ນະໂຍບາຍຕໍ່ ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 15. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການດໍາເນີນກິດຈະການດ້ານການຜະລິດກະສິກໍາທີ່ດີກ່ຽວກັບ ສຸຂະພາບ, ຄວາມປອດໄພ ແລະສະຫວັດດີການສັງຄົມຂອງຜູ້ອອກແຮງ ງານຈະໄດ້ຮັບການປະຕິບັດນະໂຍບາຍ ແລະ ການຍ້ອງຍໍຕາມຄວາມເໝາະສົມ.

### ມາດຕາ 16. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼືການຈັດຕັ້ງທີ່ລະເມີດຂໍ້ຕົກລົງ ວ່າ ດ້ວຍມາດຕະຖານການສິກໍາທີ່ດີ ກ່ຽວກັບສຸຂະພາບ, ຄວາມປອດໄພ ແລະສະຫວັດດີ ການສັງຄົມ ຂອງຜູ້ອອກ ແຮງງານສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ຫຼືລົງໂທດທາງອາຍາຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍກະສິກໍາ ຂອງສປປລາວ.

# ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 17. ການຈັດ ຕັ້ງປະຕິບັດ

ມອບໃຫ້ ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 18. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີ ຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ດຣ. ຕີ ພົມມະສັກ

**LAO PEOPLE'S DEMOCRATIC REPUBLIC**
**Peace Independence Democracy Unity Prosperity**

# Agreement of the Minister on Good Agriculture Practices for Worker Health, Safety & Welfare Standard

**Ministry of Agriculture and Forestry**

**July 2011**

## Table of Contents


Part I General Provision 13
Article 1. Objective 13
Article 2. Good Agriculture Practices for Worker Health, Safety & Welfare Module 13
Article 3. Definitions 14
Article 4. Scope 14

Part II Worker Health, Safety & Welfare Module 15
Article 5. Use of chemicals for worker health, safety & Welfare 15
Article 6. Harvesting and handling produce 16
Article 7. Working conditions 16
Article 8: Worker welfare 16
Article 9: Training 17
Article 10: References and other records 17
Article 11: Review of practices 17

Part III Labeling and Sealing 18
Article 12. Sealing 18
Article 13: Labeling 18

Part IV Certification of Good Agriculture Practices for Worker Health, Safety & Welfare Module 18
Article 14. Certification of Good Agriculture Practices 18

Part V Rewards and Sanctions 19
Article 15: Rewards 19
Article 16: Sanction 19

Part VI Final Provisions 19
Article 17: Implementation 19
Article 18: effectiveness 19

**LAO PEOPLE'S DEMOCRATIC REPUBLIC**
**Peace Independence Democracy Unity Prosperity**

---

**Ministry of Agriculture and Forestry** **No 0540 /MAF**

**Vientiane,Date 09/02/2011**

# Agreement of the Minister on Good Agriculture Practices for Worker Health, Safety & Welfare Standard

- Persuant to the Law on Agriculture, No. 1/98 LNA, dated 10 October 1998
- Persuant to the Degree of Prime Minister, No. 148/PMO, dated 10 May 2007 on the Organization and Role of Ministry of Agriculture and Forestry
- Referred to letter of Department of Agriculture, No.1176/DOA, dated 09 November 2010.

## Part I
## General Provision

### Article 1. Objective

This Agreement is provisioned as a tool for supervised Good Agriculture Practice Standards for Worker Health, Safety and Welfare Module in order to protect the welfare and benefits of Workers.

### Article 2. Good Agriculture Practices for Worker Health, Safety & Welfare Standard

Good Agriculture Practices for Worker Health, Safety & Welfare Standard has adopted from SEAN

GAP. This Standard included requirements for workers in order to protect rights and benefits, safety and social welfare of workers in Lao PDR.

**Article 3. Definitions**

Terms used in this regulation shall be interpreted as follows:

1. **Standard** A specific identifications requirements of produces, products, service, processing and environment related to quality.

2. **Good agricultural practice** Practices used to prevent or reduce the risk of hazards occurring during production, harvesting, postharvest handling of produce.
3. **Chemicals substances** The fertilizers, pesticides, hormone, waxing, soil, additives.
4. **Other chemical** The fuels, oils, and other non-agrochemicals
5. **Cleaning** The removal of soil, dirt, grease or other foreign matter.
6. **Competent authority** The Public and private authority that has authorized to develop or inspection standard and regulation as well as policy. i.e Department of Agriculture; Department of Food and Drug.
7. **Product name** A commercial/trademark name of product.
8. **User** A practical person who use fertilizers, medicines and chemicals

**Article 4. Scope**

This Agreement is applicable for persons, juristic persons, families and organizations that apply Good

Agriculture Practices standards for producing fresh fruit and vegetables in Lao PDR.

# Part II
# Worker Health, Safety & Welfare Standard

## Article 5. Use of chemicals for worker health, safety & welfare

1. Chemicals are handled and applied by authorised workers with appropriate knowledge and skills.
2. Chemicals are stored in a well light, sound and secure structure, with only authorised people allowed access. The structure is located and constructed to minimise the risk of contaminating workers and equipped with emergency facilities in the event of a chemical spill.
3. Chemicals are stored in the original container with a legible label and according to label directions or instructions from a competent authority. If a chemical is transferred to another container, the new container is clearly marked with the brand name, rate of use and withholding period.
4. Where there is a significant risk of chemical contamination of workers, Material Safety Data Sheets or safety instructions from chemical labels are readily available.
5. Facilities and first aid measures are readily available to treat workers contaminated with chemicals.
6. Accident and emergency instructions are documented and displayed in a prominent location within or close to the chemical storage area.
7. Workers handling and applying chemicals and entering newly sprayed sites are equipped with suitable protective clothing and equipment for the chemical used.
8. Protected clothing is cleaned and stored separately from crop protection products.
9. Access to sites where chemicals are being applied or newly applied is restricted for an appropriate period relevant to the chemical used. If required, chemical

application in areas of public access is marked with warning signs.

**Article 6. Harvesting and handling produce**

1. Local Workers or foreign Workers shall be healthy.
2. Workers have appropriate knowledge or are trained in personal hygiene practices and a record of training is kept.
3. Written instructions on personal hygiene practices are provided to workers or displayed in prominent locations.
4. Toilets and hand washing facilities are readily available to workers and are maintained in a hygienic condition.
5. Sewage is disposed of in a manner that minimises the risk of contamination of workers.
6. Where employers are required to provide medical and health cover, any serious health issue is reported to the relevant health authority.
7. Where required, foreign workers complete mandatory medical checks and a record is kept.
8. Measures are taken to minimise the presence of animals and vermin with infectious disease in production sites and around handling, packing and storage areas.

**Article 7. Working conditions**

1. Working conditions are suitable for workers and protective clothing is supplied where conditions are hazardous to workers.
2. All farm vehicles, equipment and tools, including electrical and mechanical devices, are adequately guarded and maintained and inspected on a regular basis for potential hazards to users.
3. Safe manual handling practices are followed to minimise the risk of injury from lifting heavy objects and excessive twisting and reaching movements.

**Article 8: Worker welfare**

1. Where provided by an employer, living quarters are suitable for human habitation and contain basic services and facilities.

2. The minimum working age shall comply with Lao PDR regulations. Where regulations are absent, workers shall be older than 15 years of age.

**Article 9: Training**

1. New workers are informed about the risks associated with health and safety when starting at the worksite.
2. Worker shall have medical cheek-up periodically or according with appropriate time schedule.
3. Workers have appropriate knowledge or are trained to a level appropriate to their area of responsibility in the following areas:
   a. operating vehicles, equipment and tools,
   b. accident and emergency procedures,
   c. personal hygiene.
   d. safe use of chemicals,
   e. Social and welfare regulation

**Article 10: References and other records**

1. Records of good agricultural practices are kept for a minimum period of at least two years or for a longer period if required by legislation or customers.
2. Out of date documents are discarded and only current versions of documents relevant to good agricultural practice are used.

**Article 11: Review of practices**

1. All practices are reviewed at least once each year to ensure that they are done correctly and actions are taken to correct any deficiencies identified. A record is kept to show that all practices have been reviewed and any corrective actions taken are documented.
2. Actions are taken to resolve complaints related to worker health, safety and welfare, and a record is kept of the complaint and actions taken.

# Part III
# Labeling and Sealing

## Article 12. Sealing

1. Only Good Agriculture Practices standards for Worker Health, Safety & Welfare Module products certified by the CB (DOA) can be labeled with the DOA seal.

2. Using the DOA seal as a product brand name is prohibited. The words specifying the Good Agriculture Practices standards for Worker Health, Safety & Welfare Module certification and the DOA seal together shall not exceed ¾ three quarters of the size of the product brand name.

## Article 13: Labeling

1. The name and address of the producer and/or operator certified by the CB (DOA) and responsible for final packing should appear on the product packaging.
2. Prior to printing, a producer and/or operator shall submit the lay-out of a product label to the CB (DOA) for approval.

# Part IV
# Certification of Good Agriculture Practices for Worker Health, Safety & Welfare Module

## Article 14. Certification of Good Agriculture Practices

The Department of Agriculture, Ministry of Agriculture and Forestry, is responsible for the evaluation, inspection and certification of Good Agriculture Practices for Worker Health, Safety & Welfare Module in Lao PDR.

# Part V
# Rewards and Sanctions

**Article 15: Rewards**

Individuals or Organizations who have performed well in the area of Good Agriculture Practices for Worker Health, Safety & Welfare Module will receive awards which deemed reasonable by the DOA.

**Article 16: Sanction**

Individuals or organizations who violate these Good Agriculture Practices Standards for Worker Health, Safety & Welfare Module will be punished by way of a warning letter, education, fine or penalty, as provided for by the Lao Agriculture Law.

# Part VI
# Final Provisions

**Article 17: Implementation**

The Department of Agriculture, Ministry of Agriculture and Forestry, in collaboration with other concerned organization shall implement this Agreement effectively.

**Article 18: effectiveness**

This Agreement of the Minister shall be effective from the date of its signature.

**Minister for Agriculture and Forestry**